**<u>ບົດຂ່າວ:</u> ລະດັບນໍ້າຂອງເຂື່ອນໄຟຟ້ານໍ້າຄານ 2-3 ຍັງຢູ່ໃນລະດັບທີ່ປອດໄພ.**

ຄະນະຮັບຜິດຊອບ ເຂື່ອນ ໄຟຟ້ານໍ້າຄານ 2-3 ໄດ້ມີການອອກແຈ້ງການເຖິງບັນດາພາກສ່ວນຕ່າງໆ ພາຍໃນເມືອງຫຼວງພະບາງ ແລະ ເມືອງຊຽງເງິນ, ແຂວງຫຼວງພະບາງ ຊາບທົ່ວເຖິງກັນວ່ານັບຕັ້ງແຕ່ວັນທີ 18 ສິງຫາ 2019 ເປັນຕົ້ນມາ ໄດ້ມີການລະບາຍນໍ້າຜ່ານປະຕູນໍ້າລົ້ນ ຂອງເຂື່ອນ ໄຟຟ້ານໍ້າຄານ 3 ດັ່ງນັ້ນ ຈຶ່ງໄດ້ປະຊາສຳພັນ ເຖິງອຳນາດການປົກຄອງ, ຜູ້ປະກອບການທຸກພາກສ່ວນ ແລະ ພໍ່ແມ່ປະຊາຊົນ ທີ່ອາໃສ່ຢູ່ລ້ອງສາຍນໍ້າຄານຕອນລຸ່ມ ໃຫ້ມີສະຕິກຽມພ້ອມ ໃຫ້ເຝົ້າລະວັງ ແລະ ເກັບມ້ຽນສິ່ງຂອງ ເພື່ອປ້ອງກັນການເສຍຫາຍ ຈາກນໍ້າຖ້ວມເຖິງ ອັນເນື່ອງມາຈາກການລະບາຍນໍ້າຜ່ານປະຕູນໍ້າລົ້ນ ແລະ ນໍ້າຫ້ອຍກ້ອງເຂື່ອນ ເຊິ່ງຈະເຮັດໃຫ້ລະດັບນໍ້າທ້າຍເຂື່ອນ ໄຟຟ້ານໍ້າຄານ 3 ແລະ ລ້ອງນໍ້າຄານຕອນລຸ່ມເພີ່ມຂຶ້ນ ແລະ ໃນວັນທີ 23 ສິງຫາ 2019 ເວລາ 14:00ໂມງ ໄດ້ມີການລະບາຍນໍ້າຄື:

- ລະບາຍຜ່ານປະຕູນໍ້າລົ້ນ ປະລິມານ 300 ແມັດກ້ອນ ຕໍ່ວິນາທີ
- ລະບາຍຜ່ານການແລ່ນຈັກ ປະລິມານ 172 ແມັດກ້ອນ ຕໍ່ວິນາທີ

ລວມປະລິມານນໍ້າລົງສູ່ທ້າຍເຂື່ອນ ໄຟຟ້າ ນໍ້າຄານ 3 ທັງໝົດ 572 ແມັດກ້ອນ ຕໍ່ວິນາທີ;

ການປ່ຽນແປງດັ່ງກ່າວ ຈະເຮັດໃຫ້ລະດັບນໍ້າທ້າຍເຂື່ອນປ່ຽນແປງ ຈາກລະດັບປົກກະຕິ 306,7 ແມັດ ທຽບໃສ່ລະດັບໜ້ານໍ້າທະເລ ມາເປັນ 308,50 ແມັດ ທຽບໃສ່ລະດັບໜ້ານໍ້າທະເລ ເຊິ່ງຈະເຮັດໃຫ້ນໍ້າທ້າຍເຂື່ອນໄຟຟ້າ ນໍ້າຄານ 3 ເພີ່ມຂຶ້ນ ລະຫວ່າງ 1,00 – 1,80 ແມັດ **<u>(ລະດັບນໍ້າດັ່ງກ່າວນີ້ ຍັງບໍ່ຈັດຢູ່ໃນລະດັບອັນຕະລາຍ).</u>** ທັງນີ້, ການລະບາຍນໍ້າດັ່ງກ່າວກໍ່ເພື່ອເປັນການຮັບປະກັນຜົນກະທົບທາງດ້ານ ສິ່ງ ແວດລ້ອມ ແລະ ສັງຄົມ ໂດຍສະເພາະບັນດາບ້ານ ທີ່ຢູ່ຕອນລຸ່ມຂອງສາຍນໍ້າຄານ. ເຖິງຢ່າງໃດກໍ່ຕາມ, ການແຈ້ງເຕືອນດັ່ງກ່າວແມ່ນໄດ້ ປະຕິບັດ ອີງຕາມສະພາບ ດິນຟ້າອາກາດໃນຊ່ວງນີ້ ຍັງມີຝົນຕົກບໍລິເວນໜ້າອ່າງຮັບນໍ້າຂອງເຂື່ອນໄຟຟ້ານໍ້າຄານ 2-3 ແລະ ອີງຕາມປະລິມານນໍ້າໄຫຼຕົວຈິງ ໃນແຕ່ລະວັນເພີ່ມຂຶ້ນ ຢ່າງຕໍ່ເນື່ອງ ເຮັດໃຫ້ການກັກເກັບນໍ້າພາຍໃນ ອ່າງເກັບນໍ້າຂອງເຂື່ອນ ໄຟຟ້າ ນໍ້າຄານ 3 ເພີ່ມຂຶ້ນເຖິງລະດັບກັກເກັບນໍ້າເຕັມອ່າງ ແລະ ເພື່ອຫຼຸດຜ່ອນຜົນກະທົບໜ້ອຍທີ່ສຸດໃນການລະບາຍນໍ້າລົງທ້າຍເຂື່ອນຫາປາກນໍ້າຄານ.

ເຂື່ອນໄຟຟ້ານໍ້າຄານ 3 ຕັ້ງຢູ່ສາຍນໍ້າຄານ ລະຫວ່າງ ບ້ານ ດອນໂມ ແລະ ບ້ານ ຄອນຫວາຍ, ເມືອງຊຽງເງິນ, ແຂວງ ຫຼວງພະບາງ, ຫ່າງຈາກຕົວເມືອງຫຼວງພະບາງ ໄປທາງທິດຕາເວັນອອກສ່ຽງໃຕ້ຕາມເສັ້ນທາງເລກທີ 13 ເໜືອ ປະມານ 24, ເຂື່ອນໄຟຟ້ານໍ້າຄານ 3 ມີກຳລັງຕິດຕັ້ງ 60 MW ສາມາດຜະລິດພະລັງງານໄຟຟ້າໄດ້ 240.8 GWh ຕໍ່ປີ. ສຳລັບເຂື່ອນໄຟຟ້ານໍ້າຄານ 2ຕັ້ງຢູ່ສາຍນໍ້າຄານ ຫ່າງຈາກເຂື່ອນໄຟຟ້າ ນໍ້າຄານ 3 ປະມານ 48 Km ຕັ້ງຢູ່ເມືອງຊຽງເງິນແຂວງຫຼວງພະບາງ ຫ່າງຈາກນະຄອນຫຼວງວຽງຈັນໄປທາງທິດເໜືອປະມານ 400 ກິໂລແມັດ ແລະ ຫ່າງຈາກໃຈກາງເມືອງຫຼວງພະບາງເຂົ້າຫາເຂື່ອນປະມານ 80 ກິໂລແມັດ.

23 AUG 2019